**ສາທາລະນະລັດປະຊາທິປະໄຕປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====000=====

ກະຊວງສາທາລະນະສຸກ

ກອງເລຂາຄະນະກຳມະການປະສານງານ

ກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ

ສປປ ລາວ

# ບົດບັນທຶກກອງປະຊຸມ

ເນື່ອງໃນໂອກາດທີ່ທ່ານ ນາງ. ປາຕຼີເຊຍ ເຄໂຊ, ຜູ້ຈັດການອາວຸໂສຂອງກອງທຶນໂລກ ໄດ້ມາຢ້ຽມຢາມ ສປປ ລາວ ໃນລະຫວ່າງວັນທີ 14-18 ພຶດສະພາ 2018 ນີ້, ດັ່ງນັ້ນ ຈຶ່ງໄດ້ຈັດກອງປະຊຸມຮ່ວມກັນຂຶ້ນລະຫວ່າງ ຄະນະກຳມະການບໍລິຫານງານກອງທຶນໂລກ (ຄບກທລ) ແລະ ຄະນະກຳມະການຕິດຕາມກວດກາ ເພື່ອຮັບຟັງ ແລະ ສົນທະນາປຶກສາຫາລືກ່ຽວກັບຜົນຂອງການຢ້ຽມຢາມ. ກອງປະຊຸມດັ່ງກ່າວນີ້ໄດ້ຈັດຂຶ້ນໂດຍການເປັນປະທານຂອງ ທ່ານ ດຣ. ສຸລານີ ຈັນສີ, ຮອງປະທານຄະນະກຳມະການປະສານງານກອງທຶນໂລກ.

I. ວັນເວລາ: ວັນສຸກ, ທີ 18 ພຶດສະພາ 2018, ເວລາ 13:30 ເຖິງ 16:30.

II. ສະຖານທີ່: ຫ້ອງປະຊຸມທີ່ຊັ້ນ 3, ກະຊວງສາທາລະນະສຸກ.

III. ຜູ້ເຂົ້າຮ່ວມ:

1. ຄະນະກຳມະການບໍລິຫານງານກອງທຶນໂລກ ຈຳນວນ 01 ທ່ານ;
2. ຄະນະກຳມະການຕິດຕາມກວດກາ ຈຳນວນ 05 ທ່ານ;
3. ຜູ້ເຂົ້າຮ່ວມຈາກພາກສ່ວນຕ່າງໆ ຈຳນວນ 18 ທ່ານ;
4. ກອງເລຂາຄະນະກຳມະການປະສານງານກອງທຶນໂລກ ຈຳນວນ 04 ທ່ານ.

   ລວມທັງໝົດ 28 ທ່ານ.

IV. ວາລະກອງປະຊຸມ:

1. ການນຳສະເໜີຜົນຂອງການຢ້ຽມຢາມ ສປປ ລາວ ໃນລະຫວ່າງວັນທີ 14-18 ພຶດສະພາ 2018 ຂອງຜູ້ຈັດການອາວຸໂສກອງທຶນໂລກ (SFPM): ການຄຸ້ມຄອງເງິນຊ່ວຍເຫຼືອ; ສະພາບການຈັດຕັ້ງປະຕິບັດແຜນງານ HIV ແລະ TB.
2. ບັນຫາອື່ນໆ ແລະ ການປິດກອງປະຊຸມ.

V. ສະຫຼຸບສັງລວມເນື້ອໃນໂດຍຫຍໍ້ຂອງກອງປະຊຸມ:

1. ການຄຸ້ມຄອງເງິນຊ່ວຍເຫຼືອ (Grant Management):
   - ຄະນະກຳມະການບໍລິຫານງານໂຄງການ (PMU ExCom) ໄດ້ຈັດກອງປະຊຸມປຶກສາຫາລືກັນຫຼາຍຄັ້ງ. ບົດບາດ ແລະ ໜ້າທີ່ຂອງຄະນະກຳມະການດັ່ງກ່າວນີ້ ບໍ່ຄວນຈະໄປຕັດສິນບັນຫາກ່ຽວກັບການປະຕິບັດໜ້າທີ່ວຽກງານໃນແຕ່ລະວັນໃຫ້ແກ່ PMU, ການປະຕິບັດໜ້າທີ່ຄວນເນັ້ນໄປທີ່ ການຕິດຕາມການຈັດຕັ້ງປະຕິບັດໜ້າທີ່ວຽກງານ,

ການລາຍງານ, ອຳນວຍຄວາມສະດວກໃນການພົວພັນ & ການປະສານງານ ໃຫ້ແກ່ PMU ກັບກົມຕ່າງໆພາຍໃນກະຊວງ ແລະ ໃຫ້ຄຳແນະນຳເລື່ອງເງິນສົມທົບຂອງລັດຖະບານ;

- ທີມງານການເງິນຂອງ PMU ຈະໄດ້ຍ້າຍໄປນັ່ງເຮັດວຽກທີ່ກົມການເງິນ ພາຍໃນວັນທີ 30 ພຶດສະພາ 2018 ແລະ ການກຳນົດກອບເວລາສຳລັບການຈັດສັນພະນັກງານຄົນອື່ນໆຂອງ PMU ແມ່ນຍັງບໍ່ທັນມີແຜນເທື່ອ;
- ໃຫ້ຫົວໜ້າຫ້ອງການ PMU ນຳພາທີມງານຂອງຕົນແກ້ໄຂບັນຫາກ່ຽວກັບໜ້າວຽກດ້ານການຄຸ້ມຄອງທີ່ຍັງຄ້າງຄາໃຫ້ສຳເລັດ ແລະ ຕິດຕາມການເຮັດວຽກຂອງພະນັກງານ M&E ກ່ຽວກັບການສ້າງແຜນການຕິດຕາມ & ປະເມີນຜົນ, ການຈັດກອງປະຊຸມປຶກສາຫາລືກັບທີມງານ DHIS2 ແລະ ຜູ້ໄດ້ຮັບທຶນຫຍ່ອຍຕ່າງໆ ຕາມແຜນທີ່ວາງໄວ້;
- ການໂອນເງິນຜ່ານບັນຊີທະນາຄານສຳລັບອັດຕາກິນ, ຄ່າເດີນທາງ ແລະ ເງິນອຸດໜູນ ໃຫ້ແກ່ຜູ້ເຂົ້າຮ່ວມກອງປະຊຸມຝຶກອົບຮົມ: ໃຫ້ PMU ເປັນຜູ້ນຳພາຈັດກອງປະຊຸມປຶກສາຫາລືກັບຜູ້ໄດ້ຮັບທຶນຫຍ່ອຍ ແລະ ແຂວງຕ່າງໆ ແລ້ວລາຍງານຜົນໄດ້ຮັບ ໃຫ້ແກ່ກອງທຶນໂລກພາຍໃນວັນທີ 30 ມິຖຸນາ 2018.

<u>ແຜນງານ TB</u>:

- ຫ້ອງວິເຄາະຂອງໂຄງການວັນນະໂຣກ (NRL) ແມ່ນຍັງບໍ່ທັນມີແຜນຍ້າຍໄປບ່ອນໃໝ່ໃນໄວໆນີ້ ສ່ວນຄ່າໃຊ້ຈ່າຍຂອງການຍ້າຍໄປຕຶກອາຄານຫຼັງໃໝ່ນີ້ ທາງກະຊວງຈະເປັນຜູ້ຮັບຜິດຊອບ;
- ເງິນບໍລິຫານຄຸ້ມຄອງ ຂອງ CSO & PSI: ຂໍ້ມູນກ່ຽວກັບຄ່າໃຊ້ຈ່າຍເງິນບໍລິຫານ, ພະນັກງານ ແລະ ນະໂຍບາຍດ້ານຊັບພະຍາກອນມະນຸດ ທີ່ລາຍງານໃຫ້ກອງທຶນໂລກແມ່ນຍັງບໍ່ທັນຈະແຈ້ງເທື່ອ, ດັ່ງນັ້ນ ຈຶ່ງໃຫ້ຢຸດການໂອນເງິນດັ່ງກ່າວນີ້ໄວ້ຊົ່ວຄາວ ຈົນກວ່າບັນຫາດັ່ງກ່າວນີ້ຈະໄດ້ຮັບການແກ້ໄຂ ແລະ ທາງ LFA ຈະທົບທວນເງື່ອນໄຂຂອງເງິນຊ່ວຍເຫຼືອຄືນໃໝ່ ເພື່ອເຮັດໃຫ້ຂອດການຈັດຕັ້ງປະຕິບັດຖືກດຳເນີນໄປໄດ້ຢ່າງວ່ອງໄວ;

<u>ແຜນງານ HIV</u>:

- ເງື່ອນໄຂຂອງເງິນຊ່ວຍເຫຼືອກ່ຽວກັບເງິນບໍລິຫານຄຸ້ມຄອງ ສຳລັບ CSO: ຂໍ້ມູນກ່ຽວກັບຄ່າໃຊ້ຈ່າຍເງິນບໍລິຫານ, ພະນັກງານ ແລະ ນະໂຍບາຍດ້ານຊັບພະຍາກອນມະນຸດ ທີ່ລາຍງານໃຫ້ກອງທຶນໂລກແມ່ນຍັງບໍ່ທັນຈະແຈ້ງເທື່ອ, ດັ່ງນັ້ນ ຈຶ່ງໃຫ້ຢຸດການໂອນເງິນດັ່ງກ່າວນີ້ໄວ້ຊົ່ວຄາວ ຈົນກວ່າບັນຫາດັ່ງກ່າວນີ້ຈະໄດ້ຮັບການແກ້ໄຂ ແລະ ທາງ LFA ຈະທົບທວນເງື່ອນໄຂຂອງເງິນຊ່ວຍເຫຼືອຄືນໃໝ່ ເພື່ອເຮັດໃຫ້ຂອດການຈັດຕັ້ງປະຕິບັດຖືກດຳເນີນໄປໄດ້ຢ່າງວ່ອງໄວ;
- ບົດລາຍງານຜົນການສຳຫຼວດການຕິດເຊື້ອເອສໄອວີ (IBBS 2017) ຂອງສາວບໍລິການ ແລະ ຊາຍມີເພດສຳພັນກັບຊາຍ ຍັງບໍ່ທັນສຳເລັດເທື່ອ: ໃຫ້ PMU ຕິດຕາມວຽກນີ້ນຳທີ່ປຶກສາ, ລົບລ້າງສັນຍາ ແລະ ໃຫ້ທີ່ປຶກສາສົ່ງຂໍ້ມູນ ແລະ ຜົນການວິເຄາະລ່າສຸດ ແລະ ອື່ນໆ ຄືນໃຫ້ PMU, ເນື່ອງຈາກວ່າທາງທີ່ປຶກສາບໍ່ສາມາດສົ່ງບົດລາຍງານດັ່ງກ່າວນີ້ໃຫ້ CHAS ແລະ PMU ໄດ້ຕາມເວລາທີ່ໄດ້ກຳນົດໄວ້;
- ການຊ່ວຍເຫຼືອດ້ານການປະສານງານສຳລັບແຜນງານ TB ແລະ HIV ຂອງ WHO UNV: ປະຈຸບັນນີ້ ໄດ້ກຳລັງສ້າງແຜນກິດຈະກຳການຮ່ວມມືສາມປີ ລວມທັງກິດຈະກຳການເຊື່ອມສານການກວດເຊື້ອພະຍາດ HIV ແລະ TB ໃນບ່ອນຄຸມຂັງ;
- ຖົງຢາງອານາໄມຍີ່ຫໍ້ກຸຫຼາບທີ່ຂາຍໃນທ້ອງຕະຫລາດແມ່ນບໍ່ມີຄຸນນະພາບ ແລະ ສະເໜີໃຫ້ ທາງ CHAS ແລະ PMU ລາຍງານບັນຫາດັ່ງກ່າວນີ້ໃຫ້ກົມອາຫານແລະຢາ (FDD) ຮັບຊາບ ເພື່ອຢຸດການນຳເຂົ້າຖົງຢາງອານາໄມດັ່ງກ່າວນີ້.

2. **ດ້ານການບໍລິຫານຄຸ້ມຄອງ (Governance):**

- GAVI ຈະທົບທວນ ພາລະບົດບາດ, ໜ້າທີ່ ແລະ ເງື່ອນໄຂຕ່າງໆ ຂອງຄະນະກຳມະການຄຸ້ມຄອງໂຄງການ (ICC) ຂອງ GAVI ເພື່ອກຳນົດໂອກາດ, ການປະສານງານ ແລະ ການຮ່ວມມືຕ່າງໆ ກັບ CCM ແລະ NPA CC. ການກຳ

ນິດໜ້າວຽກການເຊື່ອມສານຕ່າງໆເຫຼົ່ານີ້ ຈະຕ້ອງໃຫ້ແລ້ວກ່ອນປີ 2020 ເນື່ອງຈາກວ່າຮອບວຽນຂອງເງິນຊ່ວຍເຫຼືອຂອງກອງທຶນໂລກຈະສິ້ນສຸດລົງພໍດີ ແລະ ທາງ ຄປກທລ ກໍ່ຈະຕ້ອງໄດ້ຖືກປັບປຸງຄືນໃໝ່;

- ເງິນຊ່ວຍເຫຼືອຂອງ GAVI ສໍາລັບໃດງການສັກຢາ ຈະສິ້ນສຸດລົງໃນປີ 2021.

3. ການລົງຢ້ຽມຢາມໂຮງໝໍ (Health Facilities Visit) :
   - ໄດ້ໄປຢ້ຽມຢາມໂຮງໝໍເມືອງຫາດຊາຍຟອງ ແລະ ສຸກສາລາສາລາຄໍາ ເພື່ອສັງເກດເບິ່ງການໃຫ້ບໍລິການການປິ່ນປົວ ແລະ ການບໍລິການຕ່າງໆຂອງໂຮງໝໍເມືອງ ແລະ ສຸກສາລາ ດັ່ງກ່າວ ແລະ ສຶກສາເບິ່ງຄວາມເປັນໄປໄດ້ໃນການເຊື່ອມສານກິດຈະກໍາການໃຫ້ບໍລິການແກ່ຄົນເຈັບຕ່າງໆ ແລະ ການນໍາໃຊ້ລະບົບ DHIS2.

4. ການຂ້າມຜ່ານ (Transition):
   - ທັງກອງທຶນໂລກ ແລະ GAVI ໄດ້ສົນທະນາປຶກສາຫາລືກ່ຽວກັບເລື່ອງການຂ້າມຜ່ານ ແລະ ກະຊວງສາທາລະນະສຸກ ມີຄວາມຍິນດີທີ່ຈະສະໜັບສະໜູນໜ້າວຽກຂອງຂະບວນການເຮັດເລື່ອງການຂ້າມຜ່ານດັ່ງກ່າວນີ້, ແລະນອກຈາກນີ້ ຍັງມີຜູ້ໃຫ້ທຶນຈໍານວນໜຶ່ງໄດ້ກໍາລັງພິຈາລະນາເລື່ອງການຂ້າມຜ່ານນີ້ເໝືອນກັນ ເນື່ອງຈາກວ່າ ສປປ ລາວ ຈະໄດ້ບັນລຸເງື່ອນໄຂຂອງການຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາໃນ ປີ 2020 ແລ້ວ.

ກອງປະຊຸມໄດ້ດໍາເນີນໄປເປັນເວລາສາມຊົ່ວໂມງ ແລະ ໄດ້ສິ້ນສຸດລົງໃນເວລາ 16:30 ໃນຕອນບ່າຍຂອງວັນທີ 18 ພຶດສະພາ 2018.

ນະຄອນຫຼວງວຽງຈັນ, ວັນທີ 25/05/2018

| ປະທານກອງປະຊຸມ | ຜູ້ສັງລວມເນື້ອໃນກອງປະຊຸມ |
|---|---|
| ທ່ານ ນາງ ດຣ. ສຸລານີ ຈັນສີ | ທ່ານ ໜູກອນ ທະລັງສີ |